**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 3573/ກປ

ນະຄອນຫຼວງວຽງຈັນ, ວັນທີ 10 AUG 2023

# ຄຳແນະນຳ

## ກ່ຽວກັບ ການຈັດຕັ້ງປະຕິບັດ ຄຳສັ່ງ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 3635/ກປມ, ລົງວັນທີ 01 ສິງຫາ 2023.

ເພື່ອຮັບປະກັນ ຄວາມເປັນເອກະພາບ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023 ໃຫ້ປະກົດຜົນເປັນຈິງ ເຮັດໃຫ້ການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້ ມີຄວາມເຂັ້ມງວດ ທັງເປັນການ ຕ້ານ, ສະກັດກັ້ນ ແລະ ແກ້ໄຂ ປະກົດການຫຍໍ້ທໍ້ ໃນການບຸກລຸກທຳລາຍປ່າໄມ້, ການຈັບຈອງ, ຊື້ ຂາຍ ທີ່ດິນປ່າໄມ້, ການຖາງປ່າ ແລະ ຈູດປ່າ ທີ່ ເປັນຂະບວນແຜ່ລາມ ເປັນບໍລິເວນກວ້າງ ໃນແຕ່ລະປີ ໃຫ້ຫຼຸດໜ້ອຍຖອຍລົງ ກ້າວໄປເຖິງ ການຢຸດຕິ ຢ່າງສິ້ນເຊີງ ແນໃສ່ຍົກລະດັບຄວາມປົກຫຸ້ມປ່າໄມ້ ແລະ ປົກປັກຮັກສາ ທີ່ດິນປ່າໄມ້ ໃຫ້ບັນລຸ 70% ຂອງເນື້ອທີ່ທົ່ວປະເທດ ຕາມມະຕິ 026/ຄບສພ ກໍຄື ມະຕິ 098/ສພຊ ແລະ ນິຕິກຳ ທີ່ກ່ຽວຂ້ອງ, ຮັບປະກັນ ການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດສີຂຽວ ຍືນຍົງ.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:

1. ໃຫ້ ກົມປ່າໄມ້, ກົມກວດກາປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເພີ່ມທະວີຄວາມເອົາໃຈໃສ່ ແລະ ຄວາມຮັບຜິດຊອບ ທັງເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນິຕິກຳ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ກວດກາ ປ່າໄມ້,

ທີ່ດິນປ່າໄມ້ ບໍ່ໃຫ້ຖືກບຸກລຸກ, ທຳລາຍ, ຈັບຈອງ, ຊື້ ຂາຍ ດ້ວຍການຫັນການຄຸ້ມຄອງປ່າໄມ້ ໃຫ້ເຂົ້າສູ່ ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ ໂດຍຖືເອົາວຽກງານດັ່ງກ່າວ ເປັນໜ້າທີ່ການເມືອງ, ເປັນຕົວຊີ້ວັດ ຕໍ່ຜົນໄດ້ ຜົນເສຍ ໃນການນຳພາ-ຊີ້ນຳ ຂອງຄະນະພັກທຸກຂັ້ນ. ພ້ອມດຽວກັນນັ້ນ, ໃຫ້ຖືສຳຄັນ ວຽກງານໂຄສະນາ, ສຶກສາອົບຮົມ, ເຜີຍແຜ່ເຊື່ອມຊຶມ ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໃຫ້ເຂົ້າສູ່ ລວງເລິກ ແລະ ທົ່ວເຖິງ ແນໃສ່ເຮັດໃຫ້ ພະນັກງານ, ທະຫານ, ຕຳຫຼວດ, ຜູ້ປະກອບການ ແລະ ທົ່ວປວງຊົນ ຮັບຮູ້, ເຂົ້າໃຈ, ເປັນເອກະພາບ ແລະ ເຂົ້າຮ່ວມ ການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

2. ໃຫ້ ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ກວດກາຄືນ ເຂດແດນປ່າໄມ້ ແລະ ທີ່ດິນປ່າໄມ້ ແຕ່ລະປະເພດ ໃຫ້ລະອຽດ ພ້ອມທັງ ຮີບຮ້ອນ ດຳເນີນການສຳຫຼວດ ແລະ ວາງແຜນຄຸ້ມຄອງໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ ໂດຍການມີສ່ວນຮ່ວມ ຂອງທຸກພາກສ່ວນ, ພ້ອມກັນນີ້ ກໍໃຫ້ ສືບຕໍ່ກຳນົດເຂດແດນ, ປັກຫຼັກໝາຍ ແລະ ຕິດປ້າຍ ໃຫ້ຈະແຈ້ງ ດັ່ງລາຍລະອຽດລຸ່ມນີ້:

2.1. ດຳເນີນການສຳຫຼວດ ແລະ ກຳນົດແບ່ງເຂດພື້ນທີ່ ຕາມລະບົບການຄຸ້ມຄອງແຕ່ລະປະເພດປ່າໄມ້ ດັ່ງນີ້:

1). ສຳຫຼວດ ເກັບກຳຂໍ້ມູນ ກ່ຽວກັບ ຄຸນລັກສະນະຂອງພື້ນທີ່, ຄວາມຄ້ອຍຊັນ, ແຫຼ່ງນ້ຳ, ສະພາບປ່າໄມ້, ຊີວະນາໆພັນ, ຂໍ້ມູນທາງດ້ານເສດຖະກິດ-ສັງຄົມຂອງບ້ານ ທີ່ຢູ່ໃນ ແລະ ອ້ອມເຂດທີ່ຈະກຳນົດເປັນເຂດປ່າໄມ້;

2). ສຳຫຼວດ, ກຳນົດຂອບເຂດ, ປັກຫຼັກໝາຍ ແລະ ຕິດປ້າຍ ບົນພື້ນຖານການເຫັນດີ ເປັນເອກະພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

3). ສ້າງແຜນທີ່ ສະແດງ ຂອບເຂດທີ່ຕັ້ງ ແລະ ຂໍ້ມູນຈາກການສຳຫຼວດ ເປັນຕົ້ນ ສະພາບປ່າໄມ້, ຊີວະນາໆພັນ ແລະ ລະບົບນິເວດ;

4). ເປີດກອງປະຊຸມປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ເພື່ອຄວາມເປັນເອກະພາບ;

5). ສະເໜີ ອົງການທີ່ມີສິດອຳນາດ ພິຈາລະນາຮັບຮອງ.

2.2. ດຳເນີນການສ້າງແຜນຈັດສັນ ທີ່ດິນປ່າໄມ້ ຕາມແຕ່ລະປະເພດປ່າ ດັ່ງນີ້:

1). ປ່າປ້ອງກັນ ໃຫ້ກຳນົດພື້ນທີ່ເປັນເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງການນຳໃຊ້ ໂດຍການສ້າງແຜນທີ່, ປັກຫຼັກໝາຍ ແລະ ຕິດປ້າຍ ໃຫ້ຈະແຈ້ງ;

2). ປ່າສະຫງວນ ໃຫ້ກຳນົດພື້ນທີ່ເປັນເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້ ແລະ ເຂດກັນຊົນ ໂດຍການ ສ້າງແຜນທີ່, ປັກຫຼັກໝາຍ ແລະ ຕິດປ້າຍ ໃຫ້ຈະແຈ້ງ;

3). ປ່າຜະລິດ ໃຫ້ກຳນົດພື້ນທີ່ ເຂດຊຸດຄົ້ນໄມ້, ເຂດປ່າຟື້ນຟູ, ເຂດປູກໄມ້, ເຂດອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ ໂດຍການ ສ້າງແຜນທີ່, ປັກຫຼັກໝາຍ ແລະ ຕິດປ້າຍ ໃຫ້ຈະແຈ້ງ.

2.3. ດຳເນີນການວາງແຜນຈັດສັນ, ຄຸ້ມຄອງ ແລະ ນຳໃຊ້ ທີ່ດິນປ່າໄມ້ ຂັ້ນບ້ານ ທີ່ນອນຢູ່ໃນ ແລະ ຕິດກັບທີ່ດິນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ໂດຍການມີສ່ວນຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບ ທີ່ດິນປ່າໄມ້ແຕ່ລະປະເພດ ດັ່ງນີ້:

1). ທົບທວນ ແລະ ກຳນົດ ປະເພດການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດປົກຄອງຂອງບ້ານ;

2). ກຳນົດຂອບເຂດ, ປັກຫຼັກໝາຍ ແລະ ຕິດປ້າຍ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ມອບໃຫ້ບ້ານ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ບົນພື້ນຖານການມີສ່ວນຮ່ວມ ຂອງອົງການປົກຄອງບ້ານ ແລະ ປະຊາຊົນທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າໄມ້;

3). ສ້າງແຜນ ແລະ ກຳນົດມາດຕະການຈັດຕັ້ງປະຕິບັດແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ ແບບມີສ່ວນຮ່ວມ ຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າໄມ້;

4). ສ້າງຄວາມເຂັ້ມແຂງໃຫ້ບ້ານ ເປັນເຈົ້າການ ຈັດຕັ້ງປະຕິບັດແຜນການຄຸ້ມຄອງປ່າໄມ້ ຂັ້ນບ້ານ, ຕ້ານ ຫຼື ສະກັດກັ້ນໄຟໄໝ້ປ່າ, ການບຸກລຸກ ປ່າໄມ້ ແລະ ທີ່ດິນປ່າໄມ້.

3. ການແບ່ງຄວາມຮັບຜິດຊອບ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ໃຫ້ປະຕິບັດ ດັ່ງນີ້:

3.1. ປ່າປ້ອງກັນ

1). ປ່າປ້ອງກັນແຫ່ງຊາດ ແຕ່ລະແຫ່ງ ມອບໃຫ້ກອງຄຸ້ມຄອງປ່າປ້ອງກັນ ເຮັດໜ້າທີ່ ຄຸ້ມຄອງ ແລະ ປົກປັກຮັກສາ;

2). ປ່າປ້ອງກັນແຫ່ງຊາດ ທີ່ກວມເອົາຫຼາຍແຂວງ ແມ່ນກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ ໂດຍແມ່ນກົມປ່າໄມ້ ເປັນເສນາທິການ;

3). ປ່າປ້ອງກັນແຫ່ງຊາດ ທີ່ບໍ່ກວມເອົາຫຼາຍແຂວງ ມອບໃຫ້ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ ໂດຍແມ່ນ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນເສນາທິການ;

4). ປ່າປ້ອງກັນລະດັບແຂວງ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ສົມທົບກັບອົງການ ປົກຄອງເມືອງ ແລະ ບ້ານ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ;

5). ປ່າປ້ອງກັນລະດັບເມືອງ ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ສົມທົບກັບອົງການປົກຄອງບ້ານ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ;

6). ປ່າປ້ອງກັນລະດັບບ້ານ ແມ່ນ ອົງການປົກຄອງບ້ານ ເປັນຜູ້ຄຸ້ມຄອງ.

3.2. ປ່າສະຫງວນ ຫຼື ອຸທິຍານ

1). ປ່າສະຫງວນແຫ່ງຊາດ ຫຼື ອຸທິຍານ ແຕ່ລະແຫ່ງ ມອບໃຫ້ກອງຄຸ້ມຄອງປ່າສະຫງວນ ເຮັດໜ້າທີ່ ຄຸ້ມຄອງ ແລະ ປົກປັກຮັກສາ;

2). ປ່າສະຫງວນແຫ່ງຊາດ ຫຼື ອຸທິຍານ ທີ່ກວມເອົາຫຼາຍແຂວງ ແລະ ປ່າສະຫງວນ ຫຼື ອຸທິຍານ ທີ່ຂຶ້ນທະບຽນເປັນປ່າສະຫງວນລະດັບພາກພື້ນ ແລະ ສາກົນ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ ໂດຍແມ່ນກົມປ່າໄມ້ ເປັນເສນາທິການ;

3). ປ່າສະຫງວນແຫ່ງຊາດ ຫຼື ອຸທິຍານ ທີ່ບໍ່ກວມເອົາຫຼາຍແຂວງ ມອບໃຫ້ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງເປັນຜູ້ຄຸ້ມຄອງ ໂດຍແມ່ນ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນເສນາທິການ ໂດຍກົງ;

4). ປ່າສະຫງວນລະດັບແຂວງ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ສົມທົບກັບອົງການປົກຄອງເມືອງ ແລະ ບ້ານ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ;

5). ປ່າສະຫງວນລະດັບເມືອງ ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ສົມທົບກັບອົງການປົກຄອງບ້ານ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ;

6). ປ່າສະຫງວນລະດັບບ້ານ ແມ່ນ ອົງການປົກຄອງບ້ານ ເປັນຜູ້ຄຸ້ມຄອງ.

3.3. ປ່າຜະລິດ

1). ປ່າຜະລິດແຫ່ງຊາດ ແຕ່ລະແຫ່ງ ມອບໃຫ້ກອງຄຸ້ມຄອງປ່າຜະລິດ ເຮັດໜ້າທີ່ ຄຸ້ມຄອງ ແລະ ປົກປັກຮັກສາ;

2). ປ່າຜະລິດແຫ່ງຊາດ ມອບໃຫ້ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ ໂດຍແມ່ນ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນເສນາທິການ.

4. ໃຫ້ ກົມພັດທະນາຊົນນະບົດ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບກັບ ພະແນກແຜນການ ແລະ ການລົງທຶນ ແຂວງ/ນະຄອນຫຼວງວຽງຈັນ ແລະ ຂະແໜງການທີ່ກ່ຽວຂ້ອງ ກຳນົດແຜນການພັດທະນາ ໃນແຕ່ລະເຂດ ຕາມທ່າແຮງ ແລະ ເງື່ອນໄຂຈຸດພິເສດ ຂອງແຕ່ລະທ້ອງຖິ່ນ ເພື່ອຮອງຮັບການເຄື່ອນຍ້າຍຂອງພົນລະເມືອງ ຕິດພັນກັບ ການພັດທະນາອາຊີບໃໝ່ທີ່ໝັ້ນຄົງ ປ່ຽນແທນອາຊີບທີ່ອາໄສກະສິກຳ ແລະ ປ່າໄມ້ ເປັນຕົ້ນຕໍ; ພ້ອມທັງ ຈັດສັນພູມລຳເນົາຄົງທີ່, ເຂດທຳການຜະລິດ ຕິດພັນກັບການກຳນົດວິທີການ ແລະ ສົ່ງເສີມຮູບແບບການຜະລິດ ທີ່ໝັ້ນຄົງ ໃຫ້ປະຊາຊົນບັນດາເຜົ່າ ທີ່ອາໄສຢູ່ໃນເຂດຊົນນະບົດ ໂດຍສະເພາະຢູ່ໃນເຂດອຸທິຍານແຫ່ງຊາດ, ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ເພື່ອປັບປຸງຊີວິດການເປັນຢູ່ ແກ້ໄຂຄວາມທຸກຍາກ ແລະ ຢຸດຕິບັນຫາການເຄື່ອນຍ້າຍຕັ້ງຖິ່ນຖານ ພູມລຳເນົາ ຂອງປະຊາຊົນ ແບບຊະຊາຍ.

5. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກວດກາຄືນ ການອອກໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ໃບຢັ້ງຢືນການພັດທະນາທີ່ດິນ ແລະເອກະສານອື່ນ ກ່ຽວກັບ ການຄອບຄອງ, ນຳໃຊ້, ຊື້ ຂາຍ ການເຊົ່າ ຫຼື ສຳປະທານທີ່ດິນ ໃນເຂດທີ່ດິນປ່າໄມ້ ຫາກເຫັນວ່າ ການອອກອະນຸຍາດ ຫຼື ການໄດ້ມາ ໂດຍບໍ່ຖືກຕ້ອງ ແມ່ນໃຫ້ນຳສະເໜີຂັ້ນເທິງ ລົບລ້າງ ແລະ ດຳເນີນຄະດີ ຕາມກົດໝາຍ.

6. ໃຫ້ ກົມກວດກາປ່າໄມ້, ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ດຳເນີນການກວດກາ, ເກັບກຳຂໍ້ມູນ ແລະແກ້ໄຂ ການບຸກລຸກທຳລາຍປ່າໄມ້, ການຈັບຈອງ, ຊື້ ຂາຍ ທີ່ດິນປ່າໄມ້, ການດຳເນີນກິດຈະການ ຫຼື ດຳເນີນທຸລະກິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້, ກໍລະນີບໍ່ໄດ້ຮັບອະນຸຍາດ ຫຼື ເຄື່ອນໄຫວບໍ່ຖືກຕ້ອງ ແມ່ນໃຫ້ສະເໜີຂັ້ນເທິງ ຢຸດຕິ, ຍຸບເລີກ, ຮື້ຖອນ, ປະຕິບັດມາດຕະການ ແລະ ດຳເນີນຄະດີ ຕໍ່ຜູ້ລະເມີດ ຢ່າງເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 1858/ກປ, ລົງວັນທີ 24 ມີນາ 2023, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

7. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການ ສົມທົບກັບ ຂະແໜງການ ແລະອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພີ່ມທະວີຄວາມເຂັ້ມງວດ ໃນການປ້ອງກັນ, ສະກັດກັ້ນ ການຈູດປ່າ ແບບຊະຊາຍ ໂດຍຖືເອົາມາດຕະການປ້ອງກັນ ແລະ ສະກັດກັ້ນ ໄຟໄໝ້ລາມປ່າ ເປັນວຽກບຸລິມະສິດ, ໃນກໍລະນີຫາກເກີດມີໄຟໄໝ້ປ່າ ຢູ່ທ້ອງຖິ່ນໃດ ແມ່ນມອບໃຫ້ອົງການປົກຄອງທ້ອງຖິ່ນນັ້ນ ເປັນເຈົ້າການຈັດຕັ້ງກຳລັງພ້ອມທັງວັດຖຸປະກອນ ເພື່ອດັບມອດໄຟ ໃຫ້ທັນການ, ຮັບປະກັນ ບໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ ແລະແຜ່ລາມ ເປັນບໍລິເວນກວ້າງ ໂດຍໃຫ້ປະຕິບັດ ດັ່ງນີ້:

7.1. ມາດຕະການ ປ້ອງກັນ, ສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ

1). ເກັບກຳຂໍ້ມູນ, ກຳນົດເຂດທີ່ມີຄວາມສ່ຽງ ເພື່ອວາງແຜນ ສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ ແຕ່ຫົວທີ ລວມທັງວຽກງານ ຕິດຕາມ, ເຝົ້າລະວັງ ໃນແຕ່ລະໄລຍະ;

2). ຈັດຕັ້ງໜ່ວຍໂຄສະນາເຜີຍແຜ່, ແນະນຳເຕັກນິກວິຊາການ ແຕ່ຕົ້ນລະດູແລ້ງ ແລະ ປະຕິບັດເປັນປະຈຳແຕ່ລະໄລຍະ ກ່ຽວກັບ ວິທີການ ຕິດຕາມ, ເຝົ້າລະວັງ ແລະ ມາດຕະການສະກັດກັ້ນຕ້ານໄຟໄໝ້ປ່າ ໃຫ້ປະຊາຊົນ ທີ່ອາໄສຢູ່ໃນ ແລະ ນອກເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ, ບ່ອນທີ່ທຳການຜະລິດ (ເຮັດໄຮ່, ເຮັດສວນ) ແລະ ເຂດທຳມາຫາກິນ;

3). ຈັດຕັ້ງໜ່ວຍງານສະເພາະກິດ, ປະກອບ ວັດຖຸປະກອນ, ພາຫະນະ ເພື່ອລົງກວດກາລາດຕະເວນ, ເຝົ້າລະວັງ ແລະ ສະກັດກັ້ນ ໄຟໄໝ້ປ່າ ພ້ອມທັງວາງມາດຕະການແກ້ໄຂ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃຫ້ທັນກັບເວລາ ເມື່ອມີເຫດການໄຟໄໝ້ປ່າເກີດຂຶ້ນ ໃນເຂດຄວາມຮັບຜິດຊອບຕົນ.

7.2. ມາດຕະການມອດໄຟໄໝ້ປ່າ

1). ການມອດໄຟໄໝ້ປ່າ ຕ້ອງໄດ້ກະກຽມວັດຖຸປະກອນ ເປັນຕົ້ນ ຖັງສີດນ້ຳ, ຈົກ, ຊ້ວນ, ຄາດ, ພ້າ, ຂວານ, ຈັກຕັດໄມ້, ເລື່ອຍ ແລະ ວັດຖຸປະກອນມອດໄຟອື່ນໆ ທີ່ຈຳເປັນ ເພື່ອນຳໃຊ້ເຂົ້າມອດໄຟໄໝ້ປ່າໂດຍກົງ ຫຼື ສ້າງແລວກັນໄຟກັບທີ່ ຕາມຄວາມເໝາະສົມ;

2). ຖ້າຫາກເກີດມີເຫດການໄຟໄໝ້ປ່າ ຢູ່ໃນເຂດປ່າໄມ້ຂອງບ້ານ ແລະ ເມືອງ ແມ່ນມອບໃຫ້ອົງການປົກຄອງບ້ານ ຫຼື ເມືອງ ນັ້ນ ເປັນເຈົ້າການປຸກລະດົມ ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ແລະ ກຳລັງອື່ນໆ ຊ່ວຍກັນມອດໄຟ ໂດຍຖືວຽກງານດັ່ງກ່າວ ເປັນພັນທະໜ້າທີ່ຂອງທົ່ວປວງຊົນ;

3). ໃນກໍລະນີໄຟໄໝ້ປ່າຮຸນແຮງ ແລະ ເປັນບໍລິເວນກວ້າງ, ເຂົ້າຫາຍາກ ຕ້ອງປະສານກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ແຂວງທີ່ໃກ້ຄຽງ ເພື່ອຂໍຄວາມຊ່ວຍເຫຼືອໃນການມອດຢ່າງທັນການ ໂດຍການນຳໃຊ້ເຄື່ອງມື ທີ່ເໝາະສົມ ແລະ ຮັບປະກັນຄວາມປອດໄພ.

8. ໃຫ້ ກົມປ່າໄມ້ ເປັນເຈົ້າການ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງບົດແນະນຳເຕັກນິກ ກ່ຽວກັບ ການປ້ອງກັນ, ສະກັດກັ້ນ, ຕ້ານ ແລະ ມອດ ໄຟໄໝ້ປ່າ.

9. ໃຫ້ ກົມປ່າໄມ້, ກົມກວດກາປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ສ້າງເປັນແຜນການ ແລະ ໂຄງການ ປ້ອງກັນໄຟໄໝ້ລາມປ່າ ໂດຍການກຳນົດ ກິດຈະກຳ, ບຸກຄະລາກອນ, ວັດຖຸອຸປະກອນ ແລະ ງົບປະມານ ທີ່ຈຳເປັນ ໃນການສະກັດກັ້ນ, ຕ້ານ ແລະ ດັບມອດໄຟໄໝ້ລາມປ່າ ໃຫ້ລະອຽດ ເພື່ອນຳສະເໜີ ຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ ພິຈາລະນາ.

10. ໃຫ້ ກົມປ່າໄມ້, ກົມກວດກາປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສືບຕໍ່ ຈັດຕັ້ງປະຕິບັດ ຄຳສັ່ງ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ຢ່າງເຂັ້ມງວດ.

11. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ກອງຄຸ້ມຄອງປ່າໄມ້ ເຂັ້ມງວດ ໃນການປ້ອງກັນ ແລະ ສະກັດກັ້ນ ການບຸກລຸກ, ຈັບຈອງ, ຊື້ ຂາຍ, ບຸກເບີກ, ຖາກຖາງ, ຈູດ, ຕັດໄມ້, ຂະຫຍາຍເນື້ອທີ່ທຳການຜະລິດ ແລະ ດຳເນີນກິດຈະການຕ່າງໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ຢ່າງເດັດຂາດ

ມອບໃຫ້ເຈົ້າໜ້າທີ່ປ່າໄມ້ ເປັນຜູ້ເກັບກໍາ, ສັງລວມຂໍ້ມູນ ແລະ ດໍາເນີນການ ສືບສວນ-ສອບສວນ ຜູ້ກະທໍາຜິດ ເພື່ອດໍາເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

12. ຫ້າມ ພະນັກງານ ແລະ ການຈັດຕັ້ງ ທີ່ຂຶ້ນກັບກະຊວງກະສິກໍາ ແລະ ປ່າໄມ້ ສ້າງເງື່ອນໄຂ, ເອື້ອອໍານວຍຄວາມສະດວກ ຫຼື ອອກອະນຸຍາດ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນໍາໃຊ້ທີ່ດິນ ແລະ ດໍາເນີນກິດຈະການ ຢູ່ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບໍ່ສອດຄ່ອງຕາມ ກົດໝາຍ ແລະ ລະບຽບການ.

13. ຫ້າມພະນັກງານ ແລະ ການຈັດຕັ້ງ ທີ່ຂຶ້ນກັບກະຊວງກະສິກໍາ ແລະ ປ່າໄມ້ ສ້າງເງື່ອນໄຂ, ເອື້ອອໍານວຍຄວາມສະດວກ ແລະ ອອກອະນຸຍາດ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດໍາເນີນກິດຈະການ ຂຸດຄົ້ນ, ສໍາຫຼວດ ແລະ ຂຸດຄົ້ນແຮ່ທາດ ໃນເຂດ ອຸທິຍານແຫ່ງຊາດ, ປ່າສະຫງວນ ແລະ ປ່າປ້ອງກັນ.

14. ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ກອງຄຸ້ມຄອງປ່າໄມ້ ດໍາເນີນການໂຄສະນາເຜີຍແຜ່ ໃຫ້ທົ່ວສັງຄົມຮັບຊາບ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ບັນດາຂໍ້ຫ້າມ ທີ່ບໍ່ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈູດປ່າຊະຊາຍ ເພື່ອ ລ່າສັດປ່າ, ປູກຝັງ, ເປັນສະຖານທີ່ລ້ຽງສັດ ຫຼື ເພື່ອເປົ້າໝາຍອື່ນ ແລະ ໃຫ້ທົ່ວສັງຄົມເຫັນໄດ້ ຜົນຮ້າຍຂອງໄຟປ່າ ແລະ ມາດຕະການທາງດ້ານກົດໝາຍ ເຊິ່ງຜູ້ລະເມີດ ຕ້ອງຮັບຜິດຊອບ ຕໍ່ຜົນເສຍຫາຍທີ່ຕົນໄດ້ສ້າງຂຶ້ນ ແລະ ຈະຖືກດໍາເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

15. ໃຫ້ ກົມປ່າໄມ້, ກົມກວດກາປ່າໄມ້ ສົມທົບກັບ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຮີບຮ້ອນ ສ້າງຕັ້ງກອງຄຸ້ມຄອງ 3 ປະເພດປ່າ ໂດຍມີຫ້ອງການປະຈໍາຢູ່ພາກສະໜາມ ຂອງແຕ່ລະເຂດປ່າໄມ້ ແລ້ວຫັນພະນັກງານຂອງຕົນ ລົງໄປປະຈໍາການຢູ່ຫ້ອງການພາກສະໜາມ ໃຫ້ສໍາເລັດໂດຍໄວ ເພື່ອດໍາເນີນການ ຄຸ້ມຄອງ, ປົກປັກຮັກສາ, ກວດກາ ປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ທີ່ດິນປ່າໄມ້.

16. ໃຫ້ ກົມປ່າໄມ້, ກົມກວດກາປ່າໄມ້ ປະສານສົມທົບກັບ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການເຜີຍແຜ່ເຊື່ອມຊຶມ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄໍາແນະນໍາ ສະບັບນີ້ ໃຫ້ທົ່ວເຖິງ ຂັ້ນຮາກຖານກຸ່ມບ້ານ ແລະ ບ້ານ. ພ້ອມດຽວກັນນັ້ນ, ກໍ່ໃຫ້ແຕ່ງຕັ້ງຄະນະຮັບຜິດຊອບ ສະເພາະ ເພື່ອຊຸກຍູ້, ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດ ຄໍາແນະນໍາສະບັບນີ້ ຢ່າງເຂັ້ມງວດ ແລະ ລາຍງານການນໍາກະຊວງ ເປັນແຕ່ລະໄລຍະ ເພື່ອແກ້ໄຂບັນຫາຕ່າງໆ ທີ່ອາດເກີດຂຶ້ນ ໃຫ້ທັນກັບສະພາບການ.

17. ໃຫ້ ກົມປ່າໄມ້, ກົມກວດກາປ່າໄມ້, ກົມກວດກາ, ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ດໍາເນີນການກວດກາ, ຕີລາຄາປະເມີນຜົນການຈັດຕັ້ງ ຂອງພະນັກງານລັດຖະກອນ ທີ່ເຮັດໜ້າທີ່ ກວດກາ, ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍໄຈ້ແຍກໃຫ້ເຫັນເຖິງ ຄຸນທາດການເມືອງ, ຈັນຍາທໍາ, ຈັນຍາບັນ ເພື່ອຄົ້ນຄວ້ານໍາສະເໜີຂັ້ນເທິງ ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ ແລະ ເຄັ່ງຄັດປະຕິບັດລະບຽບວິໄນ ຕໍ່ຜູ້ທີ່ປະລະໜ້າທີ່, ສົມຮູ້ຮ່ວມຄິດ, ສວຍໃຊ້ໜ້າທີ່ຕໍາແໜ່ງ ແລະ ລະເມີດກົດໝາຍ ຕາມກໍລະນີໜັກ ຫຼື ເບົາ.

18. ໃຫ້ກົມປ່າໄມ້ ສົມທົບກັບ ກົມກວດກາປ່າໄມ້, ກົມກວດກາ ຄົ້ນຄວ້າສະເໜີການນໍາກະຊວງກະສິກໍາ ແລະ ປ່າໄມ້ ແຕ່ງຕັ້ງຄະນະສະເພາະກິດຂັ້ນກະຊວງ ເພື່ອຈັດຕັ້ງປະຕິບັດ ຄໍາສັ່ງສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023 ແລະ ຄໍາແນະນໍາສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ປະກົດຜົນເປັນຈິງ.

19. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຄົ້ນຄວ້ານຳສະເໜີ ການນຳແຂວງ ພິຈາລະນາ ອອກຂໍ້ຕົກລົງແຕ່ງຕັ້ງ ຄະນະສະເພາະກິດ ທີ່ປະກອບດ້ວຍບັນດາຂະແໜງການທີ່ກ່ຽວຂ້ອງ ພາຍໃນແຂວງຂອງຕົນ ເພື່ອຈັດຕັ້ງປະຕິບັດ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023 ໃຫ້ປະກົດຜົນເປັນຈິງ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ເພັດ ພົມພິພັກ